ຫ້ອງວ່າການລັດຖະບານ

ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ (ຄພທສ)

ກອງທຶນຫລຸດຜ່ອນຄວາມທຸກຍາກ (ທລຍ)

---------------------------------------------------

# ບົດສະຫລຸບການຈັດຕັ້ງປະຕິບັດໜ້າວຽກຂອງ ທລຍ

## (ປະຈຳເດືອນ 11/2013)

**ຄະນະຮັບຜິດຊອບ ທລຍ ຂັ້ນສູນກາງ**

*<u>ກະກຽມໂດຍ:</u>* ໜ່ວຍງານຕິດຕາມປະເມີນຜົນ

13 ທັນວາ 2013

*ສາລະບານ*


*ການຈັດຕັ້ງປະຕິບັດກິດຈະກຳຂອງ ທລຍ ຮອບວຽນທີ 9 ແລະ 10 ........ 1*
*I. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດຮອບວຽນ 9 (ຮອດທ້າຍເດືອນ ທັນວາ 2013) ........ 1*
*ກ. ຄວາມຄືບໜ້າດ້ານການຈັດຕັ້ງປະຕິບັດກິດຈະກຳ ........ 1*
*ຂ. ຄວາມຄືບໜ້າດ້ານການເງິນຂອງຮອບວຽນ 9 (ຮອດທ້າຍເດືອນ ພະຈິກ 2013) ........ 1*
*II. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດຮອບວຽນ 10 (ຮອດທ້າຍເດືອນ ທັນວາ 2013) ........ 2*
*ກ. ຄວາມຄືບໜ້າດ້ານການຈັດຕັ້ງປະຕິບັດກິດຈະກຳ ........ 2*
*ຂ. ຄວາມຄືບໜ້າດ້ານການເງິນຂອງຮອບວຽນ 10 (ຮອດທ້າຍເດືອນ ທັນວາ 2013) ........ 3*
*III. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດຮອບວຽນ 10 (GOL) ຮອດທ້າຍເດືອນ ທັນວາ 2013 ........ 4*
*ກ. ຄວາມຄືບໜ້າດ້ານການຈັດຕັ້ງປະຕິບັດກິດຈະກຳ: ........ 4*
*ຂ. ຄວາມຄືບໜ້າດ້ານການຈັດຕັ້ງປະຕິບັດດ້ານການເງິນ: ........ 4*
*IV. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດ ໂຄງການປັບປຸງການຄໍ້າປະກັນສະບຽງອາຫານ ຢູ່ເຂດເນີນສູງຂອງ ສປປ ລາວ (ຮອບວຽນ 9) ........ 5*
*V. ຄວາມຄືບໜ້າບາງໜ້າວຽກຂອງແຕ່ລະພະແນກ ........ 6*
*ກ. ພະແນກພັດທະນາຊຸມຊົນ ........ 6*
*ກ.1. ວຽກງານເສີມສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນ ແລະ ອຳນາດການປົກຄອງທ້ອງຖິ່ນ ........ 6*
*ກ.2 ວຽກງານກະຈາຍຂໍ້ມູນ - ຂ່າວສານ ........ 6*
*ກ.3 ວຽກງານບົດບາດຍິງ - ຊາຍ ແລະ ກຸ່ມຜູ້ດ້ອຍໂອກາດ ........ 6*
*ຂ. ພະແນກວິສະວະກຳ ........ 7*
*ຄ. ພະແນກຕິດຕາມ - ປະເມີນຜົນ ........ 7*
*ຄ.1. ວຽກງານແຜນທີ່ ........ 7*
*ຄ.2. ວຽກງານ ກສກ (ກົນໄກສະແດງຄຳຄິດຄຳເຫັນ ແລະ ແກ້ໄຂຂໍ້ຂັດແຍ່ງ) ........ 7*
*ຄ.3. ວຽກງານວິໄຈ ແລະ ປະເມີນຜົນ ........ 8*
*ຄ.4. ວຽກງານລາຍງານ ........ 8*
*ງ. ພະແນກບໍລິຫານ-ການເງິນ ........ 9*
*ງ.1. ວຽກງານຈັດຕັ້ງ ........ 9*
*ງ.2. ວຽກງານຈັດຊື້-ຈັດຈ້າງ ........ 9*
*ງ.3. ວຽກງານການເງິນ ........ 11*
*ຈ. ໂຄງການປັບປຸງຊີວິດການເປັນຢູ່ ເພື່ອຄໍ້າປະກັນດ້ານໂພສະນາການ (ໂຄງການ LONG) ........ 11*
*VI. ແຜນດຳເນີນງານ ແຕ່ວັນທີ 01-31 ທັນວາ 2013 ຂອງແຕ່ລະພະແນກ ........ 11*
*ກ. ພະແນກພັດທະນາຊຸມຊົນ ........ 12*
*ກ.1. ວຽກງານເສີມສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນ ແລະ ອຳນາດການປົກຄອງທ້ອງຖິ່ນ ........ 12*
*ກ.2 ວຽກງານກະຈາຍຂໍ້ມູນ - ຂ່າວສານ: ........ 12*
*ກ.3 ວຽກງານບົດບາດຍິງ - ຊາຍ ແລະ ກຸ່ມຜູ້ດ້ອຍໂອກາດ ........ 13*
*ຂ. ພະແນກວິສະວະກຳ ........ 13*
*ຄ. ພະແນກຕິດຕາມ-ປະເມີນຜົນ ........ 13*
*ຄ.1. ວຽກງານແຜນທີ່ ........ 13*

ຄ.2. ວຽກງານ ກສກ (ກົນໄກສະແດງຄຳຄິດຄຳເຫັນ ແລະ ແກ້ໄຂຂໍ້ຂັດແຍ່ງ) ........ 14
ຄ.3. ວຽກງານວິໄຈ ແລະ ປະເມີນຜົນ ........ 14
ຄ.4. ວຽກງານລາຍງານ ........ 14
ງ. ພະແນກບໍລິຫານ- ການເງິນ ........ 15
ງ.1. ວຽກງານຈັດຕັ້ງ ........ 15
ງ.2. ວຽກງານຈັດຊື້ຈັດຈ້າງ ........ 15
ງ.3. ວຽກງານການເງິນ ........ 15
ຈ. ໂຄງການປັບປຸງຊີວິດການເປັນຢູ່ ເພື່ອຄ້ຳປະກັນດ້ານໂພສະນາການ (ໂຄງການ LONG) ........ 16
ເອກະສານຊ້ອນທ້າຍ ........ 16

# ການຈັດຕັ້ງປະຕິບັດກິດຈະກຳຂອງ ທລຍ ຮອບວຽນທີ 9 ແລະ 10

## *I. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດຮອບວຽນ 9 (ຮອດທ້າຍເດືອນ ທັນວາ 2013)*

### *ກ. ຄວາມຄືບໜ້າດ້ານການຈັດຕັ້ງປະຕິບັດກິດຈະກຳ*

ອີງຕາມການລາຍງານໃນເດືອນທີ່ຜ່ານມາ ໂຄງການທີ່ ທລຍ ຈະຈັດຕັ້ງປະຕິບັດໃນເບື້ອງຕົ້ນຂອງຮອບວຽນ 9 ແມ່ນ 265 ໂຄງການ ພາຍຫລັງຈັດຕັ້ງປະຕິບັດຕົວຈິງມາຮອດທ້າຍເດືອນ ທັນວາ 2013 ມີ 4 ໂຄງການທີ່ບໍ່ສາມາດຈັດຕັ້ງປະຕິບັດໄດ້ໃນນັ້ນມີດັ່ງນີ້:

- 1 ໂຄງການຈາກ ແຂວງ ຫົວພັນ ເມືອງຊຽງຄໍ້ ກຸ່ມສິບມອນ ບ້ານຕະອ່ອນໃຕ້ ໂຄງການດຶງຕານາງເຄືອຄ່າຍໄຟຟ້າ ງົບປະມານແມ່ນ 66,300,000 ກີບ ໂຄງການນີ້ບໍ່ສາມາດຈັດຕັ້ງປະຕິບັດໄດ້ເນື່ອງຈາກງົບປະມານບໍ່ພຽງພໍ.
- 1 ໂຄງການຈາກແຂວງ ເຊກອງ ເມືອງກະລຶມ ກຸ່ມຈ່າແລະ ບ້ານ ຕັງປາ ໂຄງການສ້າງແຜງໂຊລາຜະລິດກະແສໄຟ້າ (Solar cell) ງົບປະມານແມ່ນ 104,000,000 ກີບ ໂຄງການນີ້ບໍ່ສາມາດຈັດຕັ້ງປະຕິບັດໄດ້ເນື່ອງຈາກພື້ນທີ່ດັ່ງກ່າວລັດຖະບານມີແຜດຶງເຄືອຄ່າຍຕາໜ່າງໄຟຟ້າເຂົ້າ.
- ແຂວງ ອັດຕະປື 1 ໂຄງການ ທີ່ເມືອງຊານໄຊ ກຸ່ມນໍ້າງອນ ບ້ານນໍ້າງອນ ໂຄງການກໍ່ສ້າງໂຮງຮຽນງົບປະມານແມ່ນ 319,535,465 ກີບ ໂຄງການນີ້ບໍ່ສາມາດຈັດຕັ້ງປະຕິບັດໄດ້ເນື່ອງຈາກງົບປະມານບໍ່ພຽງພໍ.
- ແຂວງ ຫລວງນໍ້າທາ 1 ໂຄງການ ທີ່ເມືອງນາແລ ກຸ່ມພູຫລວງ ບ້ານຫາດນາແລ້ງ ໂຄງການກໍ່ສ້າງໂຮງຮຽນງົບປະມານແມ່ນ 294,955,317 ກີບ ໂຄງການນີ້ບໍ່ສາມາດຈັດຕັ້ງປະຕິບັດໄດ້ເນື່ອງ ຈາກ ຖືກໂຄງການກໍ່ສ້າງເຂື່ອນ.

ລວມມູນຄ່າທັງໝົດທີ່ບໍ່ໄດ້ຖືກນຳໃຊ້ໃນ 4 ໂຄງການແມ່ນ 784,790,782 ກີບ, ເຊິ່ງມີຜູ້ໄດ້ຮັບຜົນປະໂຫຍດທັງໝົດແມ່ນ 1,329 ຄົນ ເປັນຍິງ 868 ຄົນ ເປັນຊົນເຜົ່າ 970 ຄົນ.

ດັ່ງນັ້ນໂຄງການທີ່ຈັດຕັ້ງປະຕິບັດໃນຮອບວຽນທີ 9 ແມ່ນເຫລືອ 261 ໂຄງການໂດຍມີຄວາມຄືບໜ້າດັ່ງນີ້: ທລຍ ໄດ້ຈັດຕັ້ງປະຕິບັດບັນດາໂຄງການຍ່ອຍໄດ້ທັງໝົດ 261 ໂຄງການ, ກວມເອົາ 100 % ຂອງໂຄງ ການທັງໝົດໃນນັ້ນມີຈຳນວນ 258 ໂຄງ ການຍ່ອຍ ຫຼື ເທົ່າກັບ 99 % ແມ່ນໄດ້ປະຕິບັດສຳເລັດແລ້ວ 100 % ເພີ່ມຂຶ້ນ 2 % ເມື່ອທຽບກັບເດືອນທີ່ຜ່ານມາ ແລະ 3 (ຫຼື 1 %) ໂຄງການຍ່ອຍແມ່ນມີຄວາມຄືບໜ້າໜ້ອຍກວ່າ 50 % ລາຍລະອຽດຂອງໂຄງການ ແລະ ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດມີດັ່ງຕາຕະລາງລຸ່ມນີ້:

<u>ຕາຕະລາງ 1: ຄວາມຄືບໜ້າຂອງໂຄງການຍ່ອຍຮອບວຽນ 9 (ແຍກຕາມຂະແໜງການ).</u>

| ຂະແໜງການ | 0% | <50% | >50% | 100% | ລວມ | ງົບປະມານ |
|---|---|---|---|---|---|---|
| ສຶກສາ | 0 | 1 | 0 | 71 | 72 | 24,965,953,346 |
| ສາທາລະນະສຸກ | 0 | 0 | 0 | 10 | 10 | 2,774,749,214 |
| ນໍ້າສະອາດ | 0 | 2 | 0 | 110 | 112 | 19,379,059,065 |
| ກະສິກຳ | 0 | 0 | 0 | 19 | 19 | 3,054,711,097 |
| ຄົມມະນາຄົມ | 0 | 0 | 0 | 45 | 45 | 9,868,848,666 |
| ພະລັງງານ | 0 | 0 | 0 | 3 | 3 | 1,099,325,971 |
| ລວມ | 0 | 3 | 0 | 258 | 261 | 61,107,547,359 |
| ເປີເຊັນ | 0% | 1% | 0% | 99% | | |

ແຫລ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ ທັນວາ 2013

ຕາຕະລາງ 2: ຄວາມຄືບໜ້າຂອງໂຄງການຍ່ອຍຮອບວຽນ 9 (ແຍກຕາມແຂວງ)

| ແຂວງ | 0% | <50% | >50% | 100% | ລວມ | ງົບປະມານ |
|---|---|---|---|---|---|---|
| ຫລວງນໍ້າທາ | 0 | 0 | 0 | 25 | 25 | 4,661,212,605 |
| ຫົວພັນ | 0 | 0 | 0 | 107 | 107 | 16,944,831,999 |
| ຊຽງຂວາງ | 0 | 0 | 0 | 32 | 32 | 9,198,522,965 |
| ສະຫວັນນະເຂດ | 0 | 0 | 0 | 41 | 41 | 14,739,611,006 |
| ສາລະວັນ | 0 | 0 | 0 | 14 | 14 | 4,264,163,359 |
| ເຊກອງ | 0 | 1 | 0 | 24 | 25 | 7,099,961,353 |
| ອັດຕະປື | 0 | 2 | 0 | 15 | 17 | 4,199,244,072 |
| ລວມ | 0 | 3 | 0 | 258 | 261 | 61,107,547,359 |
| ເປີເຊັນ | 0% | 1% | 0% | 99% | | |

ແຫລ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ ທັນວາ 2013

## *ຂ. ຄວາມຄືບໜ້າດ້ານການເງິນຂອງຮອບວຽນ 9 (ຮອດທ້າຍເດືອນ ພະຈິກ 2013)*

ຄວາມຄືບໜ້າການຈັດຕັ້ງປະຕິບັດດ້ານການເງິນ ມາຮອດທ້າຍເດືອນ ທັນວາ 2013. ການເບີກຈ່າຍງົບປະມານສໍາລັບຮອບວຽນ 9 ແມ່ນເຫັນວ່າຄວາມລ່າຊ້າເລັກນ້ອຍເມື່ອທຽບກັບຄວາມຄືບໜ້າຂອງກິດຈະ ກໍາຍ່ອຍ. ຊຶ່ງມາຮອດປັດຈຸບັນໂຄງການໄດ້ດໍາເນີນການຊໍາລະເງິນທັງໝົດຈໍານວນ 56.75 ຕື້ກີບ ຫຼື ເທົ່າກັບ 92.88 % ຂອງຈໍານວນເງິນທັງໝົດ ເພີ່ມຂື້ນ 4.46% ເມື່ອທຽບກັບເດືອນທີ່ຜ່ານມາ, ໃນນັ້ນແຂວງ ຫົວພັນ ຈໍານວນ 16.19 ຕື້ກີບ, ຫຼວງນໍ້າທາ 5.13 ຕື້ກີບ, ສະຫວັນນະເຂດ 13.25 ຕື້ກີບ, ຊຽງຂວາງ 9.00 ຕື້ກີບ, ສາລະວັນ 4.26 ຕື້ກີບ, ເຊກອງ 6.47 ຕື້ກີບ ແລະ ແຂວງ ອັດຕະປື 2.43 ຕື້ກີບ.

ເຫດຜົນໃນການຊໍາລະເງິນຊັກຊ້າເນື່ອງຈາກການຈັດຕັ້ງປະຕິບັດໂຄງການໃນເບື້ອງຕົ້ນຊ້າກວ່າທີ່ກໍານົດໄວ້ ແລະ ນອກນັ້ນແມ່ນມາຈາກຂັ້ນຕອນການກະກຽມເອກະສານການຂໍເບີກຈ່າຍຈາກຂັ້ນ ແຂວງ ແລະ ຂັ້ນເມືອງ, ການຂໍເບີກຈ່າຍໃນແຕ່ລະຄັ້ງແມ່ນໜ່ວຍງານ ທລຍ ຂັ້ນແຂວງ ແລະ ຂັ້ນເມືອງ ຕ້ອງສະຫລຸບການເບີກຈ່າຍໃນເດືອນຜ່ານມາໃຫ້ສໍາເລັດເສຍກ່ອນ ຈິ່ງສາມາດຂໍເບີກຈ່າຍໄດ້. ເຖິງແນວໃດກໍ່ຕາມ, ບັນຫາດັ່ງກ່າວແມ່ນ ໄດ້ຮັບການປັບປຸງ ແລະ ແກ້ໄຂດີຂື້ນເທື່ອລະກ້າວ.

## *II. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດຮອບວຽນ 10 (ຮອດທ້າຍເດືອນ ທັນວາ 2013)*

## *ກ. ຄວາມຄືບໜ້າດ້ານການຈັດຕັ້ງປະຕິບັດກິດຈະກໍາ*

ອີງຕາມການລາຍງານໃນເດືອນທີ່ຜ່ານມາ ໂຄງການທີ່ ທລຍ ຈະຈັດຕັ້ງປະຕິບັດໃນເບື້ອງຕົ້ນຂອງຮອບວຽນ 10 ແມ່ນ 465 ໂຄງການ ພາຍຫລັງຈັດຕັ້ງປະຕິບັດຕົວຈິງມາຮອດທ້າຍເດືອນ ທັນວາ 2013 ມີ 73 ໂຄງການທີ່ບໍ່ສາມາດຈັດຕັ້ງປະຕິບັດໄດ້ ດັ່ງນັ້ນໂຄງການຈັດຕັ້ງປະຕິບັດຕົວຈິງແມ່ນ 392 ໂຄງການ (ເຊີ້ງລາຍລະອຽດຕາມເອກະສານຊ້ອນທາຍ)

ສໍາລັບການຈັດຕັ້ງປະຕິບັດໂຄງການຍ່ອຍຮອບວຽນ 10 ມາຮອດທ້າຍເດືອນ ທັນວາ 2013, ໂຄງການໄດ້ຈັດຕັ້ງປະຕິບັດໂຄງການຍ່ອຍທັງໝົດ 387 ໂຄງການ ຫຼື ກວມເອົາ 98.72 % ຂອງຈໍານວນ ໂຄງການທັງໝົດ (392 ໂຄງ ການ), ໃນນັ້ນ ມີ 342 (ຫຼື 87 %) ໂຄງການຍ່ອຍແມ່ນໄດ້ປະຕິບັດສໍາເລັດແລ້ວ 100 % ເພີ່ມຂື້ນ 2 % ເມື່ອທຽບກັບເດືອນທີ່ຜ່ານມາ, ໂຄງການຍ່ອຍທີ່ມີຄວາມຄືບໜ້າຫລາຍກວ່າ 50 % ມີ 37 ຫຼື ເທົ່າກັບ 9 % ແລະ ມີ 8 (ຫຼື 2 %) ໂຄງການຍ່ອຍ ແມ່ນມີຄວາມຄືບໜ້າໜ້ອຍກວ່າ 50 % ແລະ ອີກ 5 ໂຄງການຍ່ອຍ ຫລື ເທົ່າກັບ 1 % ແມ່ນຍັງບໍ່ທັນມີຄວາມຄືບໜ້າ, ລາຍລະອຽດຂອງໂຄງການ ແລະ ຄືບໜ້າຂອງການຈັດຕັ້ງປະຕິບັດມີ ດັ່ງລຸ່ມນີ້:

ຕາຕະລາງ 3: ຄວາມຄືບໜ້າຂອງໂຄງການຍ່ອຍຮອບວຽນ 10 (ແຍກຕາມຂະແໜງການ)

| ຂະແໜງການ | 0% | <50% | >50% | 100% | ລວມ | ງົບປະມານ |
|---|---|---|---|---|---|---|
| ສຶກສາ | 1 | 0 | 15 | 73 | 89 | 23,731,192,267 |
| ຄົມມະນາຄົມ | 2 | 5 | 10 | 89 | 106 | 19,541,949,214 |
| ພະລັງງານ | 0 | 0 | 0 | 7 | 7 | 1,940,653,802 |
| ສາທາລະນະສຸກ | 0 | 1 | 1 | 15 | 17 | 2,660,060,282 |
| ນ້ຳສະອາດ | 2 | 1 | 11 | 138 | 152 | 21,946,640,931 |
| ທຶນສາທາລະນະສຸກ | 0 | 1 | 0 | 1 | **2** | 175,000,000 |
| ກະສິກຳ | 0 | 0 | 0 | 19 | 19 | 2,571,958,537 |
| ລວມ | 5 | 8 | 37 | 342 | 392 | 72,567,455,033 |
| ເປີເຊັນ | 1% | 2% | 9% | 87% | | |

ແຫລ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ ທັນວາ 2013

ຕາຕະລາງ 4: ຄວາມຄືບໜ້າຂອງໂຄງການຍ່ອຍຮອບວຽນ 10 (ແຍກຕາມແຂວງ)

| ແຂວງ | 0% | <50% | >50% | 100% | ລວມ | ງົບປະມານ |
|---|---|---|---|---|---|---|
| ຜົ້ງສາລີ | 1 | 1 | 2 | 20 | 24 | 5,061,450,000 |
| ອຸດົມໄຊ | 0 | 1 | 0 | 53 | 54 | 9,959,000,000 |
| ຫລວງພະບາງ | 0 | 1 | 13 | 30 | 44 | 8,680,250,000 |
| ຫຼວງນ້ຳທາ | 0 | 2 | 1 | 26 | 29 | 3,343,755,545 |
| ຫົວພັນ | 1 | 2 | 8 | 78 | 89 | 14,827,659,084 |
| ຊຽງຂວາງ | 0 | 0 | 3 | 31 | 34 | 7,409,929,291 |
| ສະຫວັນນະເຂດ | 0 | 0 | 1 | 55 | 56 | 10,636,545,527 |
| ສາລະວັນ | 0 | 0 | 1 | 18 | 19 | 3,663,297,475 |
| ເຊກອງ | 3 | 1 | 2 | 17 | 23 | 5,309,164,196 |
| ອັດຕະປື | 0 | 0 | 6 | 14 | 20 | 3,706,403,916 |
| ລວມ | 5 | 9 | 37 | 342 | 392 | 72,567,455,033 |
| ເປີເຊັນ | 1% | 2% | 9% | 87% | | |

ແຫລ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ ທັນວາ 2013

## *ຂ. ຄວາມຄືບໜ້າດ້ານການເງິນຂອງຮອບວຽນ 10 (ຮອດທ້າຍເດືອນ ທັນວາ 2013)*

ຄວາມຄືບໜ້າການຈັດຕັ້ງປະຕິບັດດ້ານການເງິນ ມາຮອດທ້າຍເດືອນ ທັນວາ 2013. ການເບີກຈ່າຍງົບປະມານສຳລັບຮອບວຽນ 10 ແມ່ນເຫັນວ່າຄວາມລ້າຊ້າເລັກນ້ອຍເມື່ອທຽບກັບຄວາມຄືບໜ້າຂອງກິດຈະກຳຍ່ອຍ. ຊຶ່ງມາຮອດປັດຈຸບັນ (ທ້າຍເດືອນ ພະຈິກ) ໂຄງການໄດ້ດຳເນີນການຊຳລະເງິນທັງໝົດຈຳນວນ 46.96 ຕື້ກີບ ຫຼືເທົ່າກັບ 64.71 % ຂອງຈຳນວນເງິນທັງໝົດ ເພີ່ມຂຶ້ນ 7.60% ເມື່ອທຽບກັບເດືອນທີ່ຜ່ານມາ, ໃນນັ້ນແຂວງຫົວພັນ ຈຳນວນ 10.75 ຕື້ກີບ, ສະຫວັນນະເຂດ 6.64 ຕື້ກີບ, ຊຽງຂວາງ 4.64 ຕື້ກີບ, ອັດຕະປື 2.45 ຕື້ກີບ ເຊກອງ 2.06 ຕື້ກີບ, ສາລະວັນ 2.28 ຕື້ກີບ, ອຸດົມໄຊ 9.32 ຕື້ກີບ, ຫລວງພະບາງ 4.79 ຕື້ກີບ, ຫລວງນ້ຳທາ 1.22 ຕື້ກີບ ແລະ ແຂວງ ຜົ້ງສາລີ ແມ່ນ 3.17 ຕື້ກີບ.

## *III. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດຮອບວຽນ 10 (GOL) ຮອດທ້າຍເດືອນ ທັນວາ 2013*

### *ກ. ຄວາມຄືບໜ້າດ້ານການຈັດຕັ້ງປະຕິບັດກິດຈະກຳ:*

ການຈັດຕັ້ງປະຕິບັດໂຄງການຍ່ອຍບ້ວງທຶນສົມທົບຂອງລັດຖະບານ ຈຳນວນທັງໝົດ 86 ໂຄງການນັ້ນ, ມາຮອດທ້າຍເດືອນ ທັນວາ 2013, ມີ 86 ໂຄງການ ຫຼື ເທົ່າກັບ 100 % ແມ່ນໄດ້ຈັດຕັ້ງປະຕິບັດສຳເລັດແລ້ວ *(ລາຍລະອຽດເບິ່ງຕາຕະລາງ 7 ລຸ່ມນີ້)*

ຕາຕະລາງ 7: ຄວາມຄືບໜ້າຂອງໂຄງການສົບທົບທຶນລັດຖະບານ ຮອດທ້າຍເດືອນ ທັນວາ 2013 (ແຍກຕາມຂະແໜງ):

| ຂະແໜງການ | 0% | <50% | >50% | 100% | ລວມ | ງົບປະມານ |
|---|---|---|---|---|---|---|
| ສຶກສາ | 0 | 0 | 0 | 15 | 15 | 4,121,567,983 |
| ຄົມມະນາຄົມ | 0 | 0 | 0 | 11 | 11 | 2,206,621,934 |
| ພະລັງງານໄຟຟ້າ | 0 | 0 | 0 | 2 | 2 | 637,591,518 |
| ສາທາລະນະສຸກ | 0 | 0 | 0 | 2 | 2 | 224,811,919 |
| ນ້ຳສະອາດ | 0 | 0 | 0 | 40 | 50 | 7,996,147,554 |
| ກະສິກຳ | 0 | 0 | 0 | 6 | 6 | 813,259,092 |
| ລວມ | 0 | 0 | 0 | 86 | 86 | 16,000,000,000 |
| ເປີເຊັນ | 0% | 0% | 0% | 100% | | |

ແຫລ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ ທັນວາ 2013

ຕາຕະລາງ 8: ໂຄງການສົບທົບທຶນລັດຖະບານ ຮອດທ້າຍເດືອນ ທັນວາ 2013 (ແຍກຕາມແຂວງ)

| ແຂວງ | 0% | <50% | >50% | 100% | ລວມ | ງົບປະມານ |
|---|---|---|---|---|---|---|
| ຫຼວງນ້ຳທາ | 0 | 0 | 0 | 18 | 18 | 2,239,400,477 |
| ຫົວພັນ | 0 | 0 | 0 | 21 | 21 | 3,493,492,695 |
| ຊຽງຂວາງ | 0 | 0 | 0 | 12 | 12 | 2,487,091,004 |
| ສະຫວັນນະເຂດ | 0 | 0 | 0 | 17 | 17 | 3,594,450,075 |
| ສາລະວັນ | 0 | 0 | 0 | 6 | 6 | 1,396,573,598 |
| ເຊກອງ | 0 | 0 | 0 | 6 | 6 | 1,349,492,008 |
| ອັດຕະປື | 0 | 0 | 0 | 6 | 6 | 1,439,500,143 |
| ລວມ | 0 | 0 | 0 | 86 | 86 | 16,000,000,000 |
| ເປີເຊັນ | 0% | 0% | 0% | 100% | | |

ແຫລ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ ທັນວາ 2013

### *ຂ. ຄວາມຄືບໜ້າດ້ານການຈັດຕັ້ງປະຕິບັດດ້ານການເງິນ:*

ມາຮອດທ້າຍເດືອນ ທັນວາ 2013, ການຊຳລະສະສາງດ້ານວຽກງານການເງິນ ແມ່ນຍັງບໍ່ທັນໄດ້ມີການເບີກຈ່າຍ ຊຶ່ງເຫັນວ່າມີຄວາມລ້າຊ້າຫຼາຍ ເມື່ອທຽບກັບຄວາມຄືບໜ້າດ້ານກິດຈະກຳ, ການເບີກຈ່າຍເງິນໃຫ້ແກ່ຜູ້ຮັບເໝົາ (ບໍລິສັດທີ່ຊະນະການປະມູນ ແລະ ນາຍຊ່າງຊຸມຊົນ) ຍັງເປັນບັນຫາທ້າທາຍພໍສົມຄວນ, ຫຼ້າສຸດ ທລຍ ໄດ້ຮັບແຈ້ງການຈາກກະຊວງການເງິນວ່າ ການປະກອບສ່ວນ ຂອງ ລັດຖະບານ ຕໍ່ໂຄງການແກ້ໄຂຄວາມທຸກ ຂອງ ທລຍ ນັ້ນ ຈະມີຄວາມຊັກຊ້າໃນທາງປະຕິບັດອີກໄລຍະໜຶ່ງເພາະວ່າລັດຖະບານເຮົາ ຍັງພົບກັບການຂາດດຸນງົບປະມານຢູ່.

ເພື່ອແກ້ໄຂຂໍ້ຫຍຸ້ງຍາກດັ່ງກ່າວ, ຄະນະບໍລິຫານໂຄງການ ທລຍ ໄດ້ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຂອງຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ ແລະ ຄະນະວິຊາການຂອງຜູ້ໃຫ້ທຶນປຶກສາຫາລືກັນ ແລະ ໄດ້ກໍານົດມາດຕະການແກ້ໄຂສະເພາະໜ້າດັ່ງລຸ່ມນີ້:

1. ໃນວັນທີ 29 ພະຈິກ 2013, ພະນະທ່ານ ບຸນເຮືອງ ດວງພະຈັນ ໄດ້ເຮັດຈົດໝາຍເຖິງ ທ່ານລັດຖະມົນຕີວ່າການກະຊວງການເງິນເພື່ອສະເໜີພິຈາລະນາເປັນບູລິມະສິດກ່ຽວກັບງົບປະມານທຶນສົມທົບຂອງລັດຖະບານ ຈໍານວນ 16 ຕື້ ກີບ ສໍາລັບການຈັດຕັ້ງປະຕິບັດ 86 ໂຄງການຍ່ອຍ ຂອງ ສົກປີ 2012-2013.
2. ນອກຈາກນີ້, ໃນວັນທີ 3 ທັນວາ 2013, ທ່ານ ບຸນກວ້າງ ສຸວັນນະພັນ, ຜູ້ອໍານວຍການບໍລິຫານກອງທຶນຫຼຸດຜ່ອນຄວາມທຸກຍາກ ໄດ້ເຮັດໜັງສືເຖິງບັນດາຜູ້ຮັບເໝົາ ເພື່ອແຈ້ງໃຫ້ຊາບຄວາມຄືບໜ້າໃນການແກ້ໄຂບັນຫາດັ່ງກ່າວ ລວມທັງສະແດງຄວາມຂອບໃຈຕໍ່ຜູ້ຮັບເໝົາທີ່ໃຫ້ການຮ່ວມມືຢ່າງສະເໜີຕົ້ນສະເໜີປາຍ.

## *IV. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດ ໂຄງການປັບປຸງການຄໍ້າປະກັນສະບຽງອາຫານ ຢູ່ເຂດເນີນສູງຂອງ ສປປ ລາວ (ຮອບວຽນ 9)*

ມາຮອດທ້າຍເດືອນ ທັນວາ 2013, ການຈັດຕັ້ງປະຕິບັດໂຄງການຍ່ອຍພາຍໃຕ້ໂຄງການປັບປຸງການຄໍ້າປະກັນສະບຽງອາຫານຢູ່ ເຂດເນີນສູງຂອງ ສປປລາວ ແມ່ນມີຄວາມຄືບໜ້າຢ່າງພົ້ນເດັ່ນຢ່າງເຫັນໄດ້ຊັດເຈນພໍສົມຄວນ, ຊຶ່ງມາຮອດປັດຈຸບັນ ວຽກງານດັ່ງກ່າວໄດ້ຈັດຕັ້ງປະຕິບັດສໍາເລັດ 100 % ເມື່ອທຽບກັບແຜນການປະຈໍາປີ, ສໍາລັບລາຍລະອຽດທາງດ້ານການເງິນແມ່ນໄດ້ສໍາເລັດການເບີກຈ່າຍແລ້ວ 10.42 ຕື້ກີບ ຫຼືເທົ່າກັບ 95.87 % ຂອງຈໍານວນເງິນທັງໝົດ ສ່ວນລາຍລະອຽດຂອງຄວາມຄືບໜ້າແມ່ນມີດັ່ງລຸ່ມນີ້.

ຕາຕະລາງ 3: ຄວາມຄືບໜ້າຂອງໂຄງການຍ່ອຍ LUFSIP ຮອດທ້າຍເດືອນ ທັນວາ 2013 (ແຍກຕາມຂະແໜງ):

| ຂະແໜງການ | 0% | <50% | >50% | 100% | ລວມ | ງົບປະມານ |
|---|---|---|---|---|---|---|
| ຄົມມະນາຄົມ | 0 | 0 | 0 | 11 | 12 | 1,786,348,495 |
| ພະລັງງານໄຟຟ້າ | 0 | 0 | 0 | 1 | 1 | 165,000,000 |
| ນໍ້າສະອາດ | 0 | 0 | 0 | 5 | 5 | 7,804,962,057 |
| ກະສິກໍາ | 0 | 0 | 0 | 72 | 77 | 8,272,346,792 |
| ລວມ | 0 | 0 | 0 | 89 | 89 | 10,223,695,287 |
| ເປີເຊັນ | 0% | 0% | 0% | 100% | | |

ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ ທັນວາ 2013

ຕາຕະລາງ 4: ຄວາມຄືບໜ້າຂອງໂຄງການຍ່ອຍ LUFSIP ຮອດທ້າຍເດືອນ ທັນວາ 2013 (ແຍກຕາມແຂວງ)

| ແຂວງ | 0% | <50% | >50% | 100% | ລວມ | ງົບປະມານ |
|---|---|---|---|---|---|---|
| ຫລວງນໍ້າທາ | 0 | 0 | 0 | 17 | 18 | 2,149,083,386 |
| ຫົວພັນ | 0 | 0 | 0 | 46 | 46 | 4,400,553,400 |
| ຊຽງຂວາງ | 0 | 0 | 0 | 8 | 8 | 841,643,323 |
| ສະຫວັນນະເຂດ | 0 | 0 | 0 | 18 | 18 | 2,832,415,177 |
| ລວມ | 0 | 0 | 0 | 89 | 89 | 10,223,695,287 |
| ເປີເຊັນ | 0% | 0% | 0% | 100% | | |

ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ ທັນວາ 2013

## V. ຄວາມຄືບໜ້າບາງໜ້າວຽກຂອງແຕ່ລະພະແນກ

### ກ. ພະແນກພັດທະນາຊຸມຊົນ

### ກ.1. ວຽກງານເສີມສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນ ແລະ ອໍານາດການປົກຄອງທ້ອງຖິ່ນ

1. ສືບຕໍ່ຈັດ ກອງປະຊຸມທົບທວນຂັ້ນບ້ານ ແລະຂັ້ນກຸ່ມ ຊຶ່ງຄາດວ່າຈະສໍາເລັດໝົດ ຢູ່ໃນອາທິດທີ່ 2 ຂອງ ເດືອນທັນວາ ທີ່ຈະມາເຖິງນີ້.
2. ສໍາເລັດໃນການຈັດກອງປະຊຸມ ປະສານງານການວາງແຜນຂັ້ນເມືອງ ຢູ່ 5 ແຂວງຄື: ແຂວງ ຫລວງນໍ້າທາ, ຫລວງພະບາງ, ຊຽງຂວາງ, ສະຫັວນນະເຂດ ແລະ ແຂວງ ສາລະວັນ.
3. ໄດ້ເຂົ້າຮ່ວມ ກອງປະຊຸມແລກປ່ຽນບົດຮຽນ ກ່ຽວກັບການພັດທະນາເສດຖະກິດຮາກຖານ ແລະ ການ ຫລຸດຜ່ອນຄວາມທຸກຍາກ ລະຫວ່າງ 10 ປະເທດອາຊຽນ ເຊິ່ງຈັດຂຶ້ນໃນລະຫວ່າງວັນທີ່ 24-30 ພະຈິກ 2013 ທີ່ປະເທດໄທ.

### ກ.2 ວຽກງານກະຈາຍຂໍ້ມູນ - ຂ່າວສານ

1. ລົງຂ່າວຢູ່ໃນເວບໄຊ້ຂອງ ທລຍ ຈໍານວນ 3 ເລື່ອງ ກ່ຽວກັບຜົນສໍາເລັດຂອງການກໍ່ສ້າງໂຮງຮຽນປະຖົມ ແລະ ຜົນສໍາເລັດຂອງການທົບທວນຄືນແຜນພັດທະນາຂັ້ນບ້ານຂອງແຂວງ ສະຫັວນນະເຂດ  ແລະ ອີກ ຫນຶ່ງບົດຂ່າວ ກ່ຽວກັບການເສີມສ້າງຄວາມອາດສາມາດ ດ້ານການສົ່ງເສີມບົດບາດຍິງ-ຊາຍ ແລະ ກຸ່ມຜູ້ ດ້ອຍໂອ ກາດ ເຂົ້າໃນວຽກງານການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ.
2. ສົ່ງບົດຂ່າວ 11 ຂ່າວ ໃຫ້ທາງຜ່ານວິທະຍຸກະຈາຍສຽງແຫ່ງຊາດ ເພື່ອອອກຂ່າວ.
3. ຈັດການສໍາພາດສົດທາງໂທລະສັບ ຜ່ານລາຍການຮອບບ້ານ-ຜ່ານເມືອງ ແມ່ນ ຂອງຜູ້ປະສານງານແຂວງ 10 ແຂວງ ເປົ້າໝາຍຂອງ ທລຍ ໂດຍສ່ວນໃຫ່ຍແມ່ນສົນທະນາກ່ຽວກັບການທົບທວນຄືນວາງແຜນ ພັດທະນາບ້ານ ແລະ ກຸ່ມບ້ານ.
4. ໃນໄລຍະດໍາເນີນກອງປະຊຸມທົບທວນຄືນ ແຜນພັດທະນາຂັ້ນບ້ານ ຢູ່ແຕ່ລະແຂວງ ໄດ້ນໍາໃຊ້ຟີມສາລະ ຄະດີແນະນໍາ ທລຍ 2 ເພື່ອໃຊ້ໃນການທົບທວນຄືນ ລະບຽບຫລັກການ ແລະ ນະໂຍບາຍຂອງ ທລຍ;
5. ຢູ່ແຂວງ ຫລວງພະບາງ ໄດ້ມີສືບຕໍ່ດໍາເນີນການສ້າງຕັ້ງ ກະດານຂ່າວກຸ່ມບ້ານ ຄາດວ່າຈະສູ້ຊົນໃຫ້ສໍາເລັດ ພາຍໃນວັນທີ 15 ທັນວາ 2013 ທີ່ຈະມາເຖິງນີ້.
6. ໄດ້ລິເລີ່ມ ສ້າງສະປອດໂຄສະນາທາງໂທລະພາບ ກ່ຽວກັບ ທລຍ II ແລະ  ສ້າງສະປອດກ່ຽວກັບ ບົດບາດ ຍິງ-ຊາຍ.
7. ສໍາເລັດໃນການກະກຽມການຜະລິດປຶ້ມແນະນໍາ ທລຍ 2 (ພາສາລາວ) 4,000 ສະບັບ, ແຟ້ມໃສ່ເອກະ ສານຂອງ ທລຍ 5,000 ສະບັບ, ແຜ່ນໂຄສະນາ FRM 208 ແຜ່ນ ແລະ ແຜ່ນໂຄສະນາ 10 ລະບຽບໃນ ແຜ່ນດຽວ 181 ແຜ່ນ.
8. ຈັດການວາງສະແດງຮູບພາບ ຢູ່ກອງປະຊຸມໂຕະມົນ ລະດັບສູງຄັ້ງທີ່ 11 ທີ່ຈັດຂຶ້ນໃນລະຫວ່າງວັນທີ່ 19-20 ພະຈິກ 2013 ທີ່ຫໍປະຊຸມແຫ່ງຊາດ ນະຄອນຫລວງວຽງຈັນ.

### ກ.3 ວຽກງານບົດບາດຍິງ - ຊາຍ ແລະ ກຸ່ມຜູ້ດ້ອຍໂອກາດ

ເລັດການຝຶກອົບຮົມ ກ່ຽວກັບວຽກງານສົ່ງເສີມບົດບາດຍິງ-ຊາຍ ແລະ ກຸ່ມຜູ້ດ້ອຍໂອກາດ 3 ຊຸດ ໃຫ້ແກ່ ຄະນະບໍລິຫານ ທລຍ ຂັ້ນສູນກາງ,   ຜູ້ປະສານງານ ທລຍ ຂັ້ນແຂວງ ແລະ ພະນັກງານ ທລຍ ຂັ້ນແຂວງໃນ 10 ແຂວງ ລາຍລະອຽດມີດັ່ງນີ້.

1. ຊຸດທີ່ 1: ວັນທີ່ 20-21 ພະຈິກ 2013 ສໍາລັບຄະນະບໍລິຫານ ທລຍ ຂັ້ນສູນກາງ ແລະ ຫົວໜ້າໂຄງການ ທລຍ ຂັ້ນແຂວງ
2. ຊຸດທີ່ 2: ວັນທີ່ 25-27 ພະຈິກ 2013 ສໍາລັບພະນັກງານຂັ້ນແຂວງ 5 ແຂວງຄື: ແຂວງຫລວງນໍ້າທາ, ຊຽງຂວາງ, ຫລວງພະບາງ, ສະຫວັນນະເຂດ ແລະ ສາລະວັນ.
3. ຊຸດທີ່ 3: ວັນທີ່ 28-30 ພະຈິກ 2013 ສໍາລັບພະນັກງານ ທລຍ ຂັ້ນແຂວງຄື: ແຂວງຜົ້ງສາລີ, ຫົວພັນ, ອຸດົມໄຊ, ເຊກອງ ແລະ ອັດຕະປື.

## *ຂ. ພະແນກວິສະວະກໍາ*

ຕິດຕາມວຽກງານການກໍ່ສ້າງໂຄງການຍ່ອຍຂອງຮອບວຽນ 10 ພ້ອມທັງສືບຕໍ່ສ້າງປື້ມຄູ່ມືກ່ອນການຈັດຕັ້ງປະຕິບັດໃຫ້ທີມງານຈັດຕັ້ງປະຕິບັດຂັ້ນບ້ານເປົ້າໝາຍຂອງ ທລຍ ພ້ອມທັງສໍາເລັດການຝຶກອົບຮົມການຄຸ້ມຄອງສັນຍາໃຫ້ 4 ແຂວງພາກໃຕ້ (ແຂວງ ອັດຕະປື, ສາລະວັນ, ເຊກອງ ແລະ ແຂວງ ເຊກອງ) ມີຜູ້ເຂົ້າຮ່ວມທັງໝົດ 34 ທ່ານ ເປັນຍິງ 01 ທ່ານ.

ໂຄງການຄໍ້າປະກັນສະບຽງອາຫານເຂດເນີນສູງຂອງ ສປປ ລາວ (ຄປຄສ-LUFSIP) ໄດ້ລົງໄປຕິດຕາມຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການ ຢູ່ເມືອງເຊໂປນ ແຂວງສະຫວັນນະເຂດຮ່ວມກັບທີມງານທະນາຄານໂລກ ຄັ້ງວັນທີ່ 19-23 ພະຈິກ 2013 ຈຸດປະສົງແມ່ນເພື່ອຕິດຕາມຄວາມຄືບໜ້າ ແລະ ຜົນໄດ້ຮັບຂອງການຈັດຕັ້ງປະຕິບັດໂຄງການ LUFSIP C1, C2 ແລະ C3a ໂດຍຜູ້ໃຫ້ທຶນໄດ້ລົງຢ້ຽມຢາມບັນດາໂຄງການຍ່ອຍທີ່ສໍາເລັດພ້ອມທັງສໍາພາດປະຊາຊົນຜູ້ທີ່ກ່ຽວຂ້ອງ ແລະ ຮັບຟັງການລາຍງານ ເຫັນວ່າຜູ້ໃຫ້ທຶນມີຄວາມພໍໃຈໃນຜົນສໍາເລັດຂອງການຈັດຕັ້ງປະຕິບັດໃນຮອບວຽນທີ່ຜ່ານມາ ແລະ ໃນວັນທີ່ 8-10 ທັນວາ 2013 ໂຄງການຄໍ້າປະກັນສະບຽງອາຫານເຂດເນີນສູງຂອງ ສປປ ລາວ (ຄປຄສ-LUFSIP) ໄດລົງໄປຕິດຕາມການທົດລອງນາໃຊ້ແບບຟອມປະເມີນໂຄງການຍ່ອຍສໍາລັບໂຄງການຂອງໂຄງການ ຮ່ວມກັບບໍລິສັດທີ່ປຶກສາ ລາວ-ອາຊີ ຄອນຊາວແຕ້ນກລຸບ ທີ່ບ້ານ ສີບຸນເຮືອງ ກຸ່ມເຫດສະບານ ເມືອງທ່າໂທມ ແຂວງ ຊຽງຂວາງ ເຊິ່ງການທົດລອງນໍາໃຊ້ແບບຟອມຄັ້ງນີ້ແມ່ນມີຜູ້ເຂົ້າຮ່ວມທັງໝົດ 45 ທ່ານ ເປັນຍິງ 17 ທ່ານ ຜົນຂອງການນໍາໃຊ້ແບບຟອມແມ່ນສາມາດຕື່ມຂໍ້ມູນໄດ້ຄົບຖ້ວນບໍ່ມີບັນຫາຫຍຸ້ງຍາກ ທັນເວລາຕາມທີ່ກໍານົດໄວ້.

## *ຄ. ພະແນກຕິດຕາມ - ປະເມີນຜົນ*

### *ຄ.1. ວຽກງານແຜນທີ່*

ສໍາເລັດການສ້າງແຜນທີ່ ຮອບວຽນ 9-10 2 ແຂວງ ທລຍ ( ລະດັບເມືອງ ) ແລະ ແຜນທີ່ຕັ້ງໂຄງການຂອງ ທລຍ I ( ຮອບວຽນ,4,5) ພ້ອມທັງສືບຕໍ່ກະກຽມສ້າງແຜນທີ່ ຮອບວຽນ 11 ຂອງ 10 ແຂວງ ທລຍ.

### *ຄ.2. ວຽກງານ ກສກ (ກົນໄກສະແດງຄໍາຄິດຄໍາເຫັນ ແລະ ແກ້ໄຂຂໍ້ຂັດແຍ່ງ)*

ຕິດຕາມ ແລະ ຕອບຮັບ ຄໍາຄິດເຫັນຜ່ານທາງອີເມລ, ສາຍດ່ວນ 161 ແລະ ການລາຍງານຄວາມຄືບຫນ້າຂອງການຈັດຕັ້ງປະຕິບັດວຽກງານ ກສກ ໃນ 10 ແຂວງເປົ້າຫມາຍຂອງ ທລຍ ພ້ອມທັງເຮັດບົດສະຫລຸບການຈັດຕັ້ງປະຕິບັດໜ້າວຽກຂອງ ທລຍ ປະຈໍາເດືອນ ທັນວາ 2013.

ສະຫຼຸບ ແລະ ເຮັດບົດລາຍງານລວມ ຄວາມຄືບໜ້າຂອງໜ້າວຽກ ກສກ ຂອງ ປະຈໍາເດືອນ ພະຈິກ 2013 ສົ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງ ຊຶ່ງໃນເດືອນ ພະຈິກ 2013 ນີ້ມີຈໍານວນຄໍາຄິດເຫັນທັງໝົດແມ່ນ 2,178 ຄໍາຄິດເຫັນເຊິ່ງໃນນັ້ນຄໍາເຫັນທີ່ກ່ຽວຂ້ອງກັບ ທລຍ ມີ 16 ຄໍາເຫັນ, ເຊິ່ງ 9 ຄໍາຄິດເຫັນແມ່ນໄດ້ຮັບຈາກຕູ້ຮັບຄໍາຄິດເຫັນຈາກ

10 ແຂວງເປົ້າໝາຍຂອງ ທລຍ ແລະ 7 ຄາຄິດເຫັນແມ່ນຜ່ານທາງ ສາຍດ່ວນ 161 ສ່ວນທີ່ເຫລືອ 2,172 ຄາເຫັນແມ່ນບໍ່ກ່ຽວຂ້ອງກັບ ທລຍ ລາຍລະອຽດດັ່ງລຸ່ມນີ້:

ຕາຕະລາງສັງລວມຄໍາຄິດເຫັນ ເດືອນ ພະຈິກ 2013

| ຄໍາຄິດເຫັນທີ່ໄດ້ຮັບ | ສານ ດ່ວນ161 | ອີ ເມລ | ຕູ້ຮັບຄໍາຄິດເຫັນ | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|
| | | | ຊຂ | ຊກ | ອປ | ສວ | ຫຼທ | ສຂ | ຫພ | ຫຼບ | ອຊ | ພລ | ລວມ |
| ຕ້ອງການຂໍ້ມູນເພີ່ມເຕີມ | 2 | - | - | - | - | - | - | - | - | - | - | - | 2 |
| ຂໍທຶນຊ່ວຍເຫລືອ | - | - | - | - | - | - | - | - | 1 | - | - | - | 1 |
| ຂອບໃຈ ທລຍ | - | - | - | - | - | - | 8 | - | - | - | - | - | 8 |
| ຮ້ອງຮຽນກ່ຽວກັບວຽກ ທລຍ | 5 | - | - | - | - | - | - | - | - | - | - | - | 5 |
| ຄໍາຄິດເຫນທີ່ບໍ່ກ່ຽວຂ້ອງກັບ ທລຍ | 2,136 | 36 | - | - | - | - | - | - | - | - | - | - | 2,172 |
| ລວມ | 2,143 | 36 | - | - | - | - | 8 | - | 1 | - | - | - | 2,188 |
| ລວມ ຄໍາຄິດເຫັນທີ່ກ່ຽວກັບ ທລຍ | 7 | - | - | - | - | - | 8 | - | 1 | - | - | - | 16 |

ແຫລ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ ພະຈິກ 2013

### *ຄ.3. ວຽກງານວິໄຈ ແລະ ປະເມີນຜົນ*

ໃນໄລຍະ 1 ເດືອນຜ່ານມາ, ວຽກງານ ວິໄຈ ແລະ ປະເມີນຜົນ ໄດ້ຈັດຕັ້ງປະຕິບັດວຽກງານຂອງຕົນຕາມພາລະບົດບາດ ແລະ ການມອບໝາຍຂອງທີມງານ ບໍລິຫານງານ ທລຍ ສູນກາງ ໃນດ້ານວິຊາສະເພາະ ແລະ ດ້ານສັງຄົມດັ່ງນີ້:

1. **<u>ດ້ານວິຊາສະເພາະແມ່ນສໍາເລັດໜ້າວຽກດັ່ງນີ້:</u>**
   - ໄດ້ກວດກາ ແລະ ມີຄໍາເຫັນຕໍ່ບັນດາຮ່າງບົດລາຍງານ ເຄິ່ງໄລຍະການປະເມີນການສ້າງຄວາມເຂັ້ມແຂງໃຫ້ແກ່ອໍານາດການປົກຄອງທ້ອງຖິ່ນ ຂອງບໍລິສັດທີ່ປຶກສາ ມີໄຊເຕັກໂນ ພ້ອມທັງໄດ້ສົ່ງບົດລາຍງານດັ່ງກ່າວໃຫ້ຜູ້ໃຫ້ທຶນເພື່ອຊາບ.
   - ໄດ້ທົບທວນ ແລະ ປັບປຸງລະບົບການຄຸ້ມຄອງຜົນກະທົບ ແລະ ຜົນໄດ້ຮັບເພື່ອຮັບໃຊ້ເຂົ້າໃນວຽກງານຂອງໂຄງການ LONG ໃຫ້ແກ່ພະນັກງານໂຄງການ LONG ຂອງ 2 ແຂວງ (ສະຫວັນນະເຂດ ແລະ ແຂວງ ຫົວພັນ)
   - ສໍາເລັດການສັງລວມລາຍຊື່ໂຄງການຍ່ອຍຮອບວຽນ 11 ພ້ອມທັງໄດ້ຄິດໄລ່ການໃຊ້ຈ່າຍງົບປະ ມານຂອງກຸ່ມບ້ານໃນໄລຍະເຄິ່ງສະໄໝ ຂອງການຈັດຕັ້ງປະຕິບັດໂຄງການ ເພື່ອປະກອບເຂົ້າໃສ່ຮ່າງບົດລາຍງານເພື່ອການປະເມີນໄລຍະເຄິ່ງອາຍຸໂຄງການ ຂອງທີມງານຜູ້ໃຫ້ທຶນ ເຊິ່ງຈະຈັດຂຶ້ນໃນລະຫວ່າງວັນທີ່ 27 ມັງກອນ ເຖິງ 14 ກຸມພາ 2014 ທີ່ຈະມາເຖິງນີ້.

### *ຄ.4. ວຽກງານລາຍງານ*

1. ສືບຕໍ່ສຶກສາຂໍ້ມູນກ່ຽວກັບໂຄງການຍ່ອຍຂອງຮອບວຽນ 9 ແລະ 10 ເພື່ອເຮັດບົດລາຍງານປະຈໍາປີຂອງ ທລຍ ອີງຕາມການປຶກສາຫາລືລະຫວ່າງ ທລຍ ກັບວິຊິຊາການຈາກທະນາຄານໂລກ ບົດລາຍງານປະຈໍາປີຕ້ອງໄດ້ສົ່ງໃຫ້ວິຊາການທະນາຄານໂລກໃຮວັນທີ່ 13 ທັນວາ 2013. ພ້ອມດຽວກັນນີ້ໄດ້ສໍາເລັດການລາຍງານຄວາມຄືບໜ້າຂອງການຈັດຕັ້ງປະຕິບັດວຽກງານໂຄງການຍ່ອຍຂອງ ທລຍ ຮອບວຽນ 10 ທີ່ຢູ່ພາຍໃຕ້ທຶນສົມທົບຂອງລັດທະບານ.

### *ຄ.5. ວຽກງານລະບົບຄຸ້ມຄອງຂໍ້ມູນຂ່າວສານ (MIS)*

ເຂົ້າຮ່ວມການປະເມີນຜົນວຽກງານ LUFSIP ທີ່ເມືອງທ່າໂທມ ແຂວງຊຽງຂວາງ ຂອງບໍລິສັດທີ່ປຶກສາລາວ-ເອເຊຍ ວັນທີ 9-13 ທັນວາ 2013 ພ້ອມທັງເຂົ້າຮ່ວມການຝຶກອົບຮົມ TOT ທີ່ບໍລິສັດ EDC ນະຄອນຫລວງວຽງຈັນ ວັນທີ 12-20 ທັນວາ 2013 ແລະ ເຂົ້າຮ່ວມກອງປະຊຸມຝຶກອົບຮົມ ໃຫ້ແກ່ພະນັກງານໃໝ່ ທລຍ ຂອງເມືອງໃໝ່ ແຂວງຫລວງພະບາງ ແລະ ແຂວງອຸດົມໄຊ.

ສືບຕໍ່ກວດກາຈຳນວນ, ຄວາມຖືກຕ້ອງຂອງການນຳເຂົ້າຂໍ້ມູນໃສ່ຖານຂໍ້ມູນຂອງຮອບວຽນ 9 ແລະ 10 ຈາກບັນດາ 10 ແຂວງເປົ້າໝາຍ ພ້ອມທັງມີການປັບປຸງ ແລະ ພັດທະນາລົບບົບຖານຂໍ້ມູນໄປພ້ອມໆ ກັນເພື່ອໃຫ້ແທດເໝາະກັບການນຳໃຊ້ຕົວຈິງ.

### *ງ. ພະແນກບໍລິຫານ-ການເງິນ*

### *ງ.1. ວຽກງານຈັດຕັ້ງ*

ສືບຕໍ່ຊຸກຍູ້ໃຫ້ການປະເມີນຜົນການປະຕິບັດວຽກຂອງພະນັກງານປະຈຳປີ 2013 ໃຫ້ສຳເລັດພາຍໃນເດືອນທັນວາ: ມາຮອດປະຈຸບັນ ສາມາດຢັ້ງຢືນໄດ້ວ່າ ການປະເມີນຜົນຂອງພະນັກງານ ທລຍ ຢູ່ແຕ່ລະຂັ້ນໄດ້ສຳເລັດສ່ວນຮ້ອຍ, ຂັ້ນຕອນຕໍ່ໄປແມ່ນໜ່ວຍງານຈັດຕັ້ງຈະເປັນຜູ້ສັງລວມຜົນຂອງການປະເມີນຜົນທັງໝົດ ເພື່ອເປັນຂໍ້ມູນ ແລະ ບ່ອນອີງໃນການອອກສັນຍາ ພ້ອມທັງສ້າງແຜນຍົກລະດັບທາງດ້ານຄວາມຮູ້ ຄວາມສາມາດ ແລະ ທັກສະໃຫ້ພະນັກງານຜູ້ທີ່ມີຄວາມຕ້ອງການ ແລະ ຈຳເປັນ.

ກະກຽມເອກະສານດ້ານວຽກງານຈັດຕັ້ງ ແລະ ອຳນວຍຄວາມສະດວກໃຫ້ແກ່ຄະນະກວດສອບພາຍນອກ: ໄດ້ສຳເລັດວຽກງານດັ່ງກ່າວສ່ວນຮ້ອຍ ແລະ ການກວດສອບຈາກພາຍນອກກ່ຽວກັບວຽກງານຈັດຕັ້ງ ແລະ ພະນັກງານກໍ່ໄດ້ສຳເລັດແລ້ວ ພຽງແຕ່ຍັງລໍຖ້າຜົນການສະຫລຸບສຸດທ້າຍເປັນທາງການຈາກບໍລິສັດກວດສອບບັນຊີ.

ກະກຽມການອອກສັນຍາໃຫ້ພະນັກງານ ສຳລັບປີ 2014 ແລະ ທົບທວນຄືນກ່ຽວກັບນະໂຍບາຍ ແລະ ລະບຽບການຕ່າງໆທາງດ້ານການຈັດຕັ້ງ ຮ່ວມກັບຄະນະບໍລິຫານງານໂຄງການ: ສຳລັບການອອກສັນຍາໃຫ້ພະນັກງານຍັງບໍ່ທັນສຳເລັດ ເນື່ອງຈາກວ່າຍັງຕ້ອງໄດ້ໃຊ້ເວລາຫລາຍສົມຄວນໃນການຫາຂໍ້ມູນ, ພິຈາລະນາດ້ານງົບປະມານ ແລະ ນະໂຍບາຍອື່ນໆສຳລັບພະນັກງານ . ເຖິງແນວໃດກໍ່ຕາມ ການອອກສັນຍາໃຫ້ພະນັກງານຈະບໍ່ກາຍເດືອນມັງກອນ 2014.

ໄດ້ສຳເລັດການຈັດຊຸດຝຶກອົບຮົມ 2 ຊຸດ ໃນຫົວຂໍ້ "ການຝຶກ ເພື່ອເປັນຄູຝຶກ" ໃຫ້ພະນັກງານ ທລຍ ສູນກາງ ແລະ ພະນັກງານ ຄພທລ ຈຳນວນໜຶ່ງ ຊຶ່ງລວມທັງໝົດມີປະມານ 20 ຄົນ ແລະ ພ້ອມນີ້ໄດ້ສຳເລັດການບັນຈຸ ແລະ ສັບຊ້ອນພະນັກງານບາງຕຳແໜ່ງດັ່ງນີ້:

**<u>ຂັ້ນສູນກາງ</u>:**

ຜູ້ຮັບຜິດຊອບວຽກເສີມສ້າງຄວາມເຂັ້ມແຂງໃຫ້ສະຖາບັນທ້ອງຖິ່ນ: ເນື່ອງຈາກວ່າການັບສະໝັກຄັ້ງທຳອິດນັ້ນຜູ້ທີ່ຖືກຄັດເລືອກຂໍສະຫລະສິດ ເພາະວ່າບໍ່ສາມາດລາອອກຈາກບ່ອນທີ່ກຳລັງເຮັດວຽກໃນປະຈຸບັນ ທລຍ ຈຶ່ງໄດ້ປະເມີນການຄັດເລືອກເປັນຄັ້ງທີ 2 ແລະ ສາມາດຄັດເລືອກໄດ້ຕາມຄາດໝາຍ ຄາດຄະເນການເລີ້ມວຽກແມ່ນຕົ້ນເດືອນ ກຸມພາ 2014.

## 7.2. ວຽກງານຈັດຊື້-ຈັດຈ້າງ

ພະແນກຈັດຊື້-ຈັດຈ້າງໄດ້ລົງປະເມີນກ່ຽວກັບຄວາມເປັນໄປໄດ້ໃນການດຳເນີນວຽກງານທາງດ້ານການເງິນ ແລະ ການປະມູນຈັດຊື້-ຈັດຈ້າງ ຢູ່ລະດັບຂັ້ນບ້ານຮ່ວມກັບທີມງານຕາງໜ້າທະນາຄານໂລກໃນ 2 ແຂວງທົດລອງ ແຂວງ ຫລວງພະບາງ ແລະ ແຂວງ ອຸດົມໄຊ ດັ່ງວັນທີ 16- 21 ທັນວາ 2013 ຜ່ານການລົງຕິດຕາມຮ່ວມກັບທີມງານທະນາຄານໂລກເຫັນວ່າ ຫ້ອງການພາກລັດທີ່ກ່ຽວຂ້ອງຂັ້ນເມືອງ ທີມງານຈັດຕັ້ງປະຕິບັດໂຄງການ, ນາຍບ້ານ, ປະຊາຊົນ ແລະ ທລຍ ເມືອງ, ແຂວງ ສ່ວນຫລາຍແມ່ນເຫັນດີໃຫ້ມີການເປີດຊອງປະມູນຢູ່ຂັ້ນບ້ານທີ່ໄດ້ຮັບຜົນປະໂຫຍດ ແຕ່ກໍ່ພົບຂໍ້ຫຍຸ້ງຍາກບາງປະການເຊັ່ນ: ທີ່ຕັ້ງຂອງບາງບ້ານທີ່ໄດ້ຮັບໂຄງການຍ່ອຍຫ່າງໄກຊອກຫລີກເຮັດໃຫ້ເປີດຊອງປະມູນໃຊ້ເວລາຫລາຍ, ຈຳນວນໂຄງການແຕ່ລະເມືອງຫລາຍເຮັດໃຫ້ການແນະນຳບໍ່ທົ່ວເຖິງ, ທີມງານຈັດຕັ້ງປະຕິບັດຂັ້ນບ້ານຍັງມີລະດັບການສຶກສາຕ່ຳ ແລະ ບໍ່ມີປະສົບການ ລວມທັງຄວາມຮູ້ຄວາມສາມາດຂອງພະນັກງານເມືອງເອງຍັງບໍ່ທັນພຽງພໍ, ໄລຍະເວລາໃນການຝຶກອົບຮົມໃຫ້ຂັ້ນບ້ານພຽງ 1 ມື້ແມ່ນບໍ່ພຽງພໍທີ່ຈະເຮັດໃຫ້ທີມງານຂັ້ນບ້ານເຂົ້າໃຈທຸກລາຍລະອຽດຂອງວຽກ ລວມທັງບໍ່ມີສະຖານທີ່ເກັບມ້ຽນເອກະສານການປະມູນທີ່ເຮັດໃຫ້ທຸກຄົນສາມາດເຂົ້າເຖິງໄດ້ ເປັນຕົ້ນ.

1. ຕິດຕາມການສ້ອມແປງຫ້ອງການ ທລຍ 5 ເມືອງ ແລະ ຫ້ອງການ ທລຍ ແຂວງ ຂອງແຂວງ ອຸດົມໄຊ ຄືບໜ້າໄປ 90 % ແລະ ຢູ່ໃນຂັ້ນຕອນການຈັດຕັ້ງປະຕິບັດວຽກ.
2. ຕິດຕາມການປະມູນສົມທຽບລາຄາການ ສ້ອມແປງຫ້ອງການ ທລຍ ເມືອງຂວາ ແລະ ຫ້ອງການ ທລຍ ແຂວງ ຂອງແຂວງ ຜົ້ງສາລີ ຄືບໜ້າ 50 % ຢູ່ໃນຂັ້ນຕອນການກໍ່ສ້າງຂອງຜູ້ຮັບເໝົາ.
3. ສຳລັບການຈັດຊື້ອຸປະກອນການແພດ ຂອງບ້ານ ດາກປຣາຫລັກຊາວ ເມືອງດາກຈຶ່ງ ແຂວງເຊກອງ ຕາມການມອບສິດຂອງທີມງານກຸ່ມບ້ານ ແລະ ກຳລັງຢູ່ໃນຂັ້ນຕອນການຈັດສົ່ງສິນຄ້າຈາກແຂວງໄປຍັງກຸ່ມບ້ານ ແລະ ການຂໍເບີກຈ່າຍເງິນ ຄືບໜ້າໄປ 90 %.
4. ການຈັດຊື້ອຸປະກອນການຮຽນການສອນ ຂອງບ້ານປີໄຮ່, ເມືອງສະໜ້ອຍ ແຂວງ ສາລະວັນ ຄືບໜ້າໄປ 90 % ລໍຖ້າການຈ່າຍເງິນ ເພາະເປັນໂຄງການທຶນສົມທົບຈາກລັດຖະບານ.
5. ສຳລັບການປະມູນຈັດຊື້ ສຳລັບອຸປະກອນການແພດ ບ້ານລະໄກ, ເມືອງນອງ, ແຂວງ ສະຫວັນນະເຂດ ຄືບໜ້າໄປ 90 % ລໍຖ້າການຈ່າຍເງິນເພາະເປັນໂຄງການທຶນສົມທົບຈາກລັດຖະບານ.
6. ຕິດຕາມການກໍ່ສ້າງຂົວອູ່ 3 ແຫ່ງ ຂອງເມືອງນາແລ ແລະ ເມືອງລອງ ແຂວງ ຫລວງນ້ຳທາ ຄືບໜ້າໄປ 20 % ພວມດຳເນີນຂັ້ນຕອນການກໍ່ສ້າງ.
7. ຕິດຕາມການກໍ່ສ້າງຝາຍນ້ຳລົ້ນ ແລະ ຂົວຈົມ ຢູ່ກຸ່ມບ້ານນາລໍາ ເມືອງໃໝ່ ແຂວງຜົ້ງສາລີ ຄືບໜ້າໄປ 15 % ພວມດຳເນີນຂັ້ນຕອນການກໍ່ສ້າງຮາກຖານຂອງຝາຍນ້ຳລົ້ນ ແລະ ຂົວຈົມ.
8. ກະກຽມການປະມູນເຄື່ອງໃຊ້ IT ສຳລັບພະນັກງານໂຄງການ LONG ກຳລັງຢູ່ໃນຂັ້ນຕອນການກະກຽມເອກະສານ.
9. ດຳເນີນຂັ້ນຕອນການປະມູນຈັດຊືເຄື່ອງເສີມກ້ອງຖ່າຍຮູບຂອງ ທລຍ ສູນກາງ ຄືບໜ້າໄປ 20 % ກຳລັງດຳເນີນຂັ້ນຕອນການປະເມີນຜົນ, ຕັດສິນ, ອອກໃບສັ່ງຊື້, ແລະ ເຊັນສັນຍາ.
10. ດຳເນີນຂັ້ນຕອນການປະມູນຈັດຊື້ເຄື່ອງກະຈ່າຍຂໍ້ມູນຂ່າວສານ ຂອງພະແນກພັດທະນາຊຸມຊົນ ຄືບໜ້າໄປ 20% ກາລັງດາເນີນຂັ້ນຕອນການປະເມີນຜົນ, ຕັດສິນ, ອອກໃບສັ່ງຊື້, ແລະ ເຊັນສັນຍາ.

11. ການປະມູນຕູ້ເຮັດນໍ້າຮ້ອນນໍ້າເຢັນຂອງຫ້ອງການ ທລຍ ທ້າເມືອງ ແລະ ຫ້ອງການ ທລຍ ແຂວງຫລວງພະບາງຄືບໜ້າໄປ 70% ກາລັງດາເນີນຂັ້ນຕອນການຈັດສົ່ງ.
12. ຕິດຕາມການປະມູນຈັດຊື້ເຟີນິເຈີ, ຕູ້ເຮັດນໍ້າຮ້ອນນໍ້າເຢັນ, ສ້ອມແປງຫ້ອງການ ທລຍ ເມືອງໄຊ ແຂວງອຸດົມໄຊ ຄືບໜ້າໄປ 10% ກາລັງຢູ່ໃນຂັ້ນຕອນການກະກຽມເອກະສານປະມູນ.
13. ຕິດຕາມການປະມູນຈັດຊື້ເຟີນິເຈີ, ຕູ້ເຮັດນໍ້າຮ້ອນນໍ້າເຢັນ, ສ້ອມແປງຫ້ອງການ ທລຍ ເມືອງຈອມເພັດແຂວງຫລວງພະບາງຄືບໜ້າໄປ 10% ກາລັງພວມຢູ່ໃນຂັ້ນຕອນການກະກຽມເອກະສານປະມູນ.
14. ສົ່ງລວມແບບສອບຖາມການປະເມີນວຽກງານການປະມູນຈັດຊື້ໂຄງການຍ່ອຍສຳລັບແຂວງທົດລອງຫລວງພະບາງ, ອຸດົມໄຊ ແລະຜົ້ງສາລີ ແລະ ກຳລັງຢູ່ໃນຂັ້ນຕອນການປະເມີນ.
15. ສຳເລັດກະກຽມແຜນຈັດຊື້ ສຳລັບສົກປີ 2013-2014 ພາຍໃຕ້ໂຄງການ ທລຍ 2 ແລະ ສົ່ງໃຫ້ທະນາຄານໂລກແລ້ວ ໃນວັນທີ 20 ພະຈິກ 2013.
16. ສຳເລັດກະກຽມແຜນຈັດຊື້ ສຳລັບສົກປີ 2013-2014 ພາຍໃຕ້ໂຄງການ LONG ແລະ ສົ່ງໃຫ້ທະນາຄານໂລກແລ້ວ ໃນວັນທີ 15 ພະຈິກ 2013.
17. ສຳເລັດການກະກຽມຕາຕະລາງຂໍ້ມູນການດຳເນີນການປະມູນໂຄງການຍ່ອຍ ຮອບວຽນທີ 10 ສົ່ງໃຫ້ທະນາຄານໂລກ ເພື່ອກຽມລົງມາກວດກາເອກະສານ.

### ງ.3. *ວຽກງານການເງິນ*

1. ກະກຽມເອກກະສານສຳລັບການກວດສອບຈາກພາກສ່ວນພາຍນອກ, ໂດຍສະເພາະເອກະສານການເບີກຈ່າຍຕ່າງໆ.
2. ສຳເລັດການເຮັດບົດລາຍງານການເງິນ ປະຈຳສົກປີ 2012-2013 ໃຫ້ຜູ້ໃຫ້ທືນ.
3. ສຳເລັດການຄຸ່ງນເງິນໂຄງການຍອ່ຍຮອບວຽນ 10 ປີ 2013 ສຳລັບແຂວງ ສະຫວັນນະເຂດ ແລະແຂວງ ຄຳມ່ວນ ຈຳນວນ 1,090.ໂດລາ
4. ສຳເລັດການເຮັດບົດລາຍງານການເງິນ ປະຈຳເດືອນ ຕຸລາ 2013.
5. ພະນັກງານການເງິນແຂວງໄດ້ເຂົ້າຮ່ວມຝຶກອົບຮົມກ່ຽວກັບບົດບາດຍິງ - ຊາຍ ຂອງທາງພະແນກພັດທະນາຊຸມຊົນເປັນຜູ້ຈັດ.
6. ຕິດຕາມການເບີກຈ່າຍເງິນໂຄງກນຍ່ອຍ ງວດ 2 ຂອງຮອບວຽນ 9.

## ຈ. *ໂຄງການປັບປຸງຊີວິດການເປັນຢູ່ ເພື່ອຄໍ້າປະກັນດ້ານໂພສະນາການ (ໂຄງການ LONG)*

ສຳລັບໂຄງການປັບປຸງຊີວິດການເປັນຢູ່ ເພື່ອຄໍ້າປະກັນດ້ານໂພສະນາການ (ໂຄງການ LONG)ໄດ້ສືບຕໍ່ປັບປຸງຮ່າງບົດບັນທຶກຄວາມເຂົ້າໃຈ ຮ່ວມກັບກະຊວງສາທາ, ເຮັດການໄດ້ຮ່າງຄືນໃໝ່ຕາມການຊີ້ນຳຂອງທ່ານຜູ້ອຳນວຍການ ທລຍ ພ້ອມນີ້ໄດ້ລົງວາງແຜນແກ້ໄຂວຽກໂພສະນາການ ເມືອງວຽງທອງແຂວງຄຳມ່ວນ ແລະ ເມືອງເຊໂປນ ແຂວງ ສະຫວັນນະເຂດ, ໃນນັ້ນ ຫົວໜ້າໂຄງການໄດ້ປະຊຸມຮ່ວມກັນ ອ້າຍນ້ອງພະນັກງານ ປະຈຳທັງສອງເມືອງ ເຮັດການວາງແຜນເພື່ອດຳເນີນກິດຈະກຳ ການສົ່ງເສີມໂພສະນາການ ຂອງໂຄງການໂດຍສົມທົບກັບຫ້ອງການສາທາເມືອງ ຕາມການແນະນຳຂອງທະນາຄານໂລກ.

ໃນວັນທີ່ 11-13 ທັນວາ 2013 ຢູ່ທີ່ເມືອງເຊໂປນ ແຂວງ ສະຫວັນນະເຂດ ໂດຍໄດ້ແນະນາຮ່າງເກັບກາຂໍ້ມູນ ແລະ ວິທີການປ້ອນຂໍ້ມູນຕົວຈິງໃຫ້ພະນັກງານກຸ່ມບ້ານ ແລະ ຂັ້ນເມືອງ ສາມາດປ້ອນຂໍ້ມູນຕົວຈິງສໍາເລັດປະມານ 60 % ແລະ ຈະສືບຕໍ່ປ້ອນສ່ວນທີ່ເຫຼືອ ເພາະຂໍ້ມູນບາງສ່ວນຍັງບໍ່ສາມາດ ປ້ອນໄດ້ໃນທັນທີ ແລະ ບາງຂໍ້ມູນກໍ່ບໍ່ສາມາດຫາໄດ້ໃນທັນທີ ເພາະຍັງຢູ່ຂັ້ນບ້ານ ຫຼືບໍ່ໄດ້ບັດທຶກເນື່ງຈາກເປັນຄັ້ງທໍາອິດ ຈິ່ງຕ້ອງການເກັບຕື່ມອີກເພື່ອໃຫ້ແທດເໝາະກັບຖານຂໍ້ມູນ ພ້ອມກັນນີ້ກໍ່ໄດ້ສືບຕໍ່ລົງປັບປຸງຮ່າງ ແລະ ການປ້ອນຂໍ້ມູນໃສ່ຮ່າງຕິດຕາມ ແລະ ປະເມີນຜົນ ຄປພ ໂດຍນໍາເອົາຮ່າງຖານຂໍ້ມູນ ທີ່ມີການປັບປຸງໃໝ່ເຊັ່ນ: ຮ່າງການເກັບກໍາການທ້ອນເງິນທີ່ແຕ່ກ່ອນແຍກຟາຍ ຂອງແຕ່ລະເດືອນ ແລະ ປີ, ໄດ້ປັບປຸງໃໝ່ແມ່ນເອົາເຂົ້າມາເປັນຟາຍດຽວ ເພື່ອງາຍໃນການສັງລວມ ລະວິເຄາະຕີລາຄາ ຕະຫຼອດເຕັກນິກ ການດັດແປງລະບົບຟາຍ ເພື່ອຮັບປະກັນໃນການສັງລວມ ແລະ ວິເຄາະຂອງລະບົບ.

ໃນວັນທີ່ 17-29 ທັນວາ 2013 ໄດ້ນາພາຄະນະທີ່ປຶກສາໄລຍະສັ້ນດ້ານການຕະຫຼາດເຄື່ອງປ່າຂອງດົງລົງຈາກສະຖາບັນຄົ້ນຄ້ວາກະສິກໍາ ແລະ ປ່າໄມ້ແຫ່ງຊາດ ຈໍານວນ 4 ທ່ານ ເອົາຂໍ້ມູນຢູ່ແຂວງຫົວພັນ ແລະ ແຂວງສະຫວັນນະເຂດ ເຊິ່ງກວມເອົາບ້ານເກົ່າ ແລະ ບ້ານທີ່ມີແຜນຂະຫຍາຍໃໝ່ ເຊິ່ງໃນນັ້ນ ກໍ່ໄດ້ນໍາພາຄະນະທີ່ປຶກສາເຂົ້າພົບ ແລະ ສໍາພາດເອົາຂໍ້ມູນ ນໍາພາກສ່ວນທີ່ກ່ຽວຂອງ ຈາກພາກລັດເຊັ່ນ: ຫ້ອງການກະສິກໍາເມືອງ, ຫ້ອງການການຄ້າເມືອງເປັນຕົ້ນ ເຊິ່ງຜົນໃນເບື້ອງຕົ້ນສາມາດໄດ້ຂໍ້ມູນກ່ຽວກັບຕ່ອງໂສ້ການຕະລາດຂອງຊຸມຊົນວ່າ: ຊຸມຊົນຜະລິດຫຍັງ ມີຜະລິດຕະພັນຫຍັງ ແລະ ສະຖານທີ່ຈັດຈໍາໜ່າຍ ພ້ອມທັງລະບົບສັນຍາການຈັດຊື້ຕ່າງໆລະຫວ່າງຊຸມຊົນແລະຜູ້ຊື້.

## *VI. ແຜນດໍາເນີນງານ ແຕ່ວັນທີ 01-31 ມັງກອນ 2014 ຂອງແຕ່ລະພະແນກ*

### *ກ. ພະແນກພັດທະນາຊຸມຊົນ*

#### *ກ.1. ວຽກງານເສີມສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນ ແລະ ອໍານາດການປົກຄອງທ້ອງຖິ່ນ*

1. ລົງຊຸກຍູ້ ແລະ ແນະນໍາ ກ່ຽວກັບການຈັດຕັ້ງປະຕິບັດວຽກງານຮອບວຽນທີ່ 11 ໃຫ່ແກ່ພະນັກງານ ທລຍ ຊຸມຊົນຢູ່ແຕ່ລະແຂວງ.
2. ສ້າງບ້ານຕົວແບບ ໃນດ້ານການຈັດຕັ້ງປະຕິບັດໂຄງການຍ່ອຍ ທີ່ຂັບເຄື່ອນໂດຍຊຸມຊົນເອງ ຢ່າງໜ້ອຍ ແຕ່ລະເມືອງໃຫ້ໄດ້ 1 ບ້ານ.
3. ຝຶກອົບຮົມກ່ຽວກັບ ວຽກງານ ທລຍ ໃຫ້ແກ່ພະນັກງານ ແຂວງໃໝ່.
4. ສືບຕໍ່ຈັດກອງປະຊຸມ ປະສານງານການວາງແຜນຂັ້ນເມືອງ ໃຫ້ສໍາເລັດຢູ່ໃນອາທິດທີ່ 2 ຂອງເດືອນທັນວາ 2013.
5. ຕິດຕັ້ງຕູ້ຮັບຄໍາເຫັນ ຢູ່ສອງເມືອງເປົ້າໝາຍໃໝ່ ຄືເມືອງໄຊ ແຂວງ ອຸດົມໄຊ ແລະ ເມືອງຈອມເພັດ ແຂວງ ຫລວງພະບາງ.

#### *ກ.2 ວຽກງານກະຈາຍຂໍ້ມູນ - ຂ່າວສານ:*

1. ສົມທົບກັບ ກົມຂ່າວສານ ສະຫະພັນແມ່ຍິງ ຜະລິດສະປອດໂຄສະນາ ກ່ຽວກັບການສົ່ງເສີມບົດບາດຍິງ-ຊາຍ ໃນການພັດທະນາຊົນນະບົດ ພາຍໃຕ້ວຽກງານ ທລຍ.

2. ສົມທົບກັບໂທລະພາບແຫ່ງຊາດ ໃນການຜະລິດຟີມສາລະຄະດີ ກ່ຽວກັບການແກ້ໄຂຄວາມທຸກຍາກໃນລະດັບຄອບຄົວ ຜ່ານກິດຈະປັບປຸງຊີວິດການເປັນຢູ່ ເພື່ອຄ້ຳປະກັນທາງດ້ານໂພຊະນາການ.
3. ຜະລິດໂປດສະເຕີ ເພື່ອສະໜອງໃຫ້ແກ່ເມືອງ, ກຸ່ມບ້ານ ແລະ ບ້ານເປົ້າໝາຍໃໝ່ຂອງ ທລຍ ຢູ່ແຂວງອຸດົມໄຊ ແລະ ແຂວງຫລວງນ້ຳທາ.
4. ສົ່ງຂ່າວໃຫ້ວິທະຍຸແຫ່ງຊາດ, ກົມຂ່າວສານແມ່ຍິງລາວ ແລະ ໜັງສືພີມຕ່າງໆໃຫ້ໄດ້ 10 ຂ່າວ.
5. ສືບຕໍ່ເຂົ້າຮ່ວມ ລາຍການລຸງສ້າງ-ລຸງສາ ພາຍໃຕ້ຫົວຂໍ້ວິທີການຈັດຊື້-ຈັດຈ້າງ ໂຄງການຍ່ອຍ ແລະ ການຈັດຕັ້ງປະຕິບັດໂຄງການຍ່ອຍ ສໍາລັບຮອບວຽນທີ່ 11.
6. ສືບຕໍ່ ປະສານສົມທົບ ກັບ ພະແນກວິສະວະກໍາ ແລະ ພະແນກບໍລິຫານການເງິນ ໃນການກະກຽມຜະລິດຟີມສາລະຄະດີ ເພື່ອກະຈາຍຂໍ້ມູນຂ່າວສານ ໃຫ້ແກ່ຊຸມຊົນ.

### *ກ.3 ວຽກງານບົດບາດຍິງ - ຊາຍ ແລະ ກຸ່ມຜູ້ດ້ອຍໂອກາດ*

ສືບຕໍ່ ຈັດຝຶກອົບຮົມ ກ່ຽວກັບວຽກງານສົ່ງເສີມບົດບາດຍິງ-ຊາຍ ແລະ ກຸ່ມຜູ້ດ້ອຍໂອກາດ ໃຫ້ແກ່ພະນັກງານ ທລຍ ຂັ້ນເມືອງ ທີ່ນອນໃນ 2 ແຂວງຄື:

- ວັນທີ່ 16-18 ທັນວາ 2013 ຝຶກໃຫ້ແກ່ພະນັກງານແຂວງຫົວພັນ.
- ວັນທີ່ 19-21 ທັນວາ 2013 ຝຶກໃຫ້ແກ່ພະນັກງານແຂວງຊຽງຂວາງ.

ທັງ 2 ຊຸດຝຶກອົບຮົມດັ່ງກ່າວນີ້ ຈະໄດ້ຈັດຂຶ້ນ ຢູ່ທີ່ໂພນສະຫວັນ, ແຂວງ ຊຽງຂວາງ.

## *ຂ. ພະແນກວິສະວະກໍາ*

1. ສືບຕໍ່ກາຝຶກອົບຮົມຄຸ້ມຄອງສັນຍາ ແລະ ການເອົາວິຊາການຂັ້ນແຂວງມາຢ້ຽມຢາມແລກປ່ຽນບົດຮຽນລະຫວ່າງແຂວງກັບແຂວງ.
2. ຕິດຕາມການສໍາຫລວດອອກແບບຮອບວຽນ 12 ສໍາລັບໂຄງການຂອງ ທລຍ ແລະ ຂອງລັດຖະບານ.
3. ຕິດຕາມການກໍ່ສ້າງຂົວອູ່ຂອງ Helvetas ທີ່ແຂວງຫລວງນ້ຳທາ
4. ສືບຕໍ່ປັບປຸງຄູ່ມືການຈັດຕັ້ງປະຕິບັດ ແລະ ຄຸ້ມຄອງການນໍາໃຊ້.
5. ຂຶ້ນແຜນທັດສະນະສຶກສາ LUFSIP ພາກເໜືອ.
6. ຕິດຕາມການເຮັດທົດລອງກ່ຽວກັບການປະເມີນຜົນທາງດ້ານຄຸນນະພາບຂອງ LUFSIP.
7. ຕິດຕາມການເຮັດບົດລາຍງານກ່ຽວຂອງການປະເມີນຜົນທາງດ້ານຄຸນວິຊາການຂອງ ທລຍ 2.
8. ເຂົ້າຮ່ວມກອງປະຊຸມກ່ອນການຈັດຕັ້ງປະຕິບັດ.

## *ຄ. ພະແນກຕິດຕາມ-ປະເມີນຜົນ*

### *ຄ.1. ວຽກງານແຜນທີ່*

1. ສືບຕໍ່ສ້າງແຜນທີ່ ຮອບວຽນ 11 10ແຂວງ ທລຍ.
2. ຕຽມແຜນທີ່ ທລຍ 1+2 ພາກພາສາອັງກິດ ເພື່ອພິມໃຫ້ ແຂວງ ແລະ ເມືອງຕ່າງໆ ຂອງ ທລຍໃສ່ເຈ້ຍຂະໜາດ A1.
3. ກະກຽມຈັດຝຶກອົບຮົມການສ້າງແຜນທີ່ ຂັ້ນບ້ານ ໃຫ້ແກ່ ພະນັກງານ M&E ທັງ10 ແຂວງ ທລຍໃນວັນທີ່ 20-24 ມັງກອນ 2014.

### *ຄ.2. ວຽກງານ ກສກ (ກົນໄກສະແດງຄຳຄິດຄຳເຫັນ ແລະ ແກ້ໄຂຂໍ້ຂັດແຍ່ງ)*

1. ສະຫຼຸບ ແລະ ເຮັດບົດລາຍງານລວມ ຄວາມຄືບໜ້າຂອງໜ້າວຽກ ກສກ ປະຈຳເດືອນ ທັນວາ  2013 ສົ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງ.
2. ກະກຽມບົດສະຫລຸບການຈັດຕັ້ງປະຕິບັດໜ້າວຽກຂອງ ທລຍ ປະຈຳເດືອນ ມັງກອນ 2014.
3. ຕິດຕາມ ແລະ ຕອບຮັບ ຄຳຄິດເຫັນຜ່ານທາງອີເມລ, ສາຍດ່ວນ 161 ແລະ ການລາຍງານຄວາມຄືບຫນ້າຂອງການຈັດຕັ້ງປະຕິບັດວຽກງານ ກສກ ໃນ 10 ແຂວງເປົ້າຫມາຍຂອງ ທລຍ.

### *ຄ.3. ວຽກງານວິໄຈ ແລະ ປະເມີນຜົນ*

1. ສືບຕໍ່ຕິດຕາມການປະເມີນການສ້າງຄວາມເຂັ້ມແຂງໃຫ້ແກ່ອຳນາດການປົກຄອງທ້ອງຖິ່ນຂອງຂອງບໍລິສັດທີ່ປຶກສາ ມີໄຊເຕັກໂນ.
2. ສືບຕໍ່ຕິດຕາມເອົາບົດລາຍງານຜົນການປະເມີນຜົນດ້ານປະສິດທິຜົນການຈັດຕັ້ງປະຕິບັດໂຄງການ ຂອງທີມງານບໍລິສັດທີ່ປຶກສາ ລາວ-ອາຊີ.
3. ສືບຕໍ່ຮ່າງພາລະບົດບາດ (ToR)   ການປະເມີນຄວາມຍືນຍົງຂອງໂຄງການຢູ່ບັນດາແຂວງເປົ້າໝາຍເກົ່າຂອງ ທລຍ ເຊິ່ງໄດ້ສຳເລັດການຈັດຈັ້ງປະຕິບັດໃນປີ 2008 (ເມືອງ ແອດ ແລະ ເມືອງສົບເບົາ ແຂວງຫົວພັນ,  ເມືອງບາຈຽງ, ສຸຂຸມມາ, ມູນລະປະໂມກ, ປະທຸມພອນ ແລະ ເມືອງໂຂງ ແຈວງຈຳປາສັກ) ເຊິ່ງຄາດວ່າຈະໃຫ້ສາມາດດຳເນີນການໄດ້ໃນເດືອນ ກຸມພາ 2014 ທີ່ຈະມາເຖິງນີ້.
4. ສັງລວມ ແລະ ວິໄຈ ແຜນການຈັດຕັ້ງປະຕິບັດວຽກງານ ທລຍ ໃນສົກປີ 2013 -2014.
5. ຈັດຕັ້ງປະຕິບັດໜ້າອື່ນຕາມພາລະບົດບາດຂອງຕົນ ແລະ ການມອບໝາຍຂອງຄະນະບໍລິຫານ ງານ ທລຍ.

### *ຄ.4. ວຽກງານລາຍງານ*

1. ກະກຽມເຮັດບົດລາຍງານສຳລັບກອງປະຊຸມທົບທວນຄືນການຈັດຕັ້ງປະຕິບັດໂຄງການຍ່ອຍກາງສະໃໝເຊິ່ງຄາດວ່າຮ່າງທຳອິດຂອງບົດລາຍງານຕ້ອງໃຫ້ສຳເລັດພາຍໃນວັນທີ 25 ທັນວາ 2013.
2. ສ້າງປຶ້ມຄູ່ມືກ່ຽວກັບ ລະບົບລາຍງານ ແລະ ການເກັບກຳຂໍ້ມູນ ສຳລັບໂຄງການ ທລຍ ເພື່ອແລກປ່ຽນໃຫ້ພະນັກງານໃນໜ່ວຍງານຕິດຕາມປະເມີນຜົນ ເປັນບ່ອນອີງໃນການເຮັດລາຍງານ ຄາດວ່າຈະສຳເລັດໃນເດືອນ ກຸມພາ 2014.
3. ກະກຽມລາຍງານປະຈຳເດືອນ ມັງກອນ 2014 ກ່ຽວກັບຄວາມຄືບໜ້າການຈັດຕັ້ງປະຕິບັດໂຄງການຍ່ອຍຮອບວຽນ 9, 10  ແລະ 11.

### *ຄ.5. ວຽກງານລະບົບຄຸ້ມຄອງຂໍ້ມູນຂ່າວສານ (MIS)*

1. ສືບຕໍ່ພັດທະນາລະບົບຖານຂໍ້ມູນຂອງ ທລຍ.
2. ຈະຊອກຫາວິທີການ ແລະພັດທະນາຮູບແບບ ຂັ້ນຕອນຂອງການລາຍງານ ໃຫ້ຖືກຕ້ອງແທດເໝາະກັບສະພາບການຕົວຈິງ.

## ງ. ພະແນກບໍລິຫານ- ການເງິນ

### ງ.1. ວຽກງານຈັດຕັ້ງ

1. ກະກຽມການອອກສັນຍາໃຫ້ພະນັກງານ ສໍາລັບປີ 2014.
2. ກະກຽມຂໍ້ມູນສໍາລັບການມາປະເມີນໂຄງການການງສະໄໝຂອງບັນດາຜູ້ໃຫ້ທຶນ.
3. ກະກຽມການກວດກາກ່ຽວກັບວຽກງານຈັດຕັ້ງຂອງໜ່ວຍງານກວດກາພາຍໃນ ທລຍ.
4. ສືບຕໍ່ດໍາເນີນການບັນຈຸ ແລະ ສັບຊ້ອນພະນັກງານໃນຕໍາແໜ່ງທີ່ຍັງຫວ່າງ.

### ງ.2. ວຽກງານຈັດຊື້ຈັດຈ້າງ

1. ຕິດຕາມການປະມູນຕູ້ເຮັດນໍ້າຮ້ອນ-ນໍ້າເຢັນຂອງຫ້ອງການ ທລຍ 5 ເມືອງ ແລະ ຫ້ອງການ ທລຍ ແຂວງ ແຂວງ ຫລວງພະບາງ.
2. ຕິດຕາມການດໍາເນີນຂັ້ນຕອນການປະມູນສິນທຽບລາຄາ ການສ້ອມແປງຫ້ອງການ ທລຍ ເມືອງຂວາ ແລະ ຫ້ອງການ ທລຍ ແຂວງ ຂອງແຂວງ ຜົ້ງສາລີ.
3. ຕິດຕາມການຈັດຕັ້ງປະຕິບັດການກໍ່ສ້າງຂົວອູ່ 3 ແຫ່ງ ຂອງເມືອງລອງ ແລະ ເມືອງນາແລ ແຂວງ ຫລວງນໍ້າທາ
4. ຕິດຕາມການຈັດຕັ້ງປະຕິບັດການກໍ່ສ້າງຝາຍນໍ້າລົ້ນ ແລະ ຂົວຈົມບ້ານນາລໍາ ເມືອງໃໝ່ ແຂວງຜົ້ງສາລີ
5. ກະກຽມການປະມູນເຄື່ອງໃຊ້ IT ສໍາລັບພະນັກງານໂຄງການ LONG.
6. ການປະມູນຕູ້ເຮັດນໍ້າຮ້ອນນໍ້າເຢັນຂອງຫ້ອງການ ທລຍ ຫ້າເມືອງ ແລະ ຫ້ອງການ ທລຍ ແຂວງ ຫລວງພະບາງ.
7. ຕິດຕາມການປະມູນຈັດຊື້ເຟີນິເຈີ, ຕູ້ເຮັດນໍ້າຮ້ອນນໍ້າເຢັນ, ສ້ອມແປງຫ້ອງການ ທລຍ ເມືອງໄຊ ແຂວງ ອຸດົມໄຊ
8. ຕິດຕາມການປະມູນຈັດຊື້ເຟີນິເຈີ, ຕູ້ເຮັດນໍ້າຮ້ອນນໍ້າເຢັນ, ສ້ອມແປງຫ້ອງການ ທລຍ ເມືອງຈອມເພັດ ແຂວງ ຫລວງພະບາງ.
9. ດໍາເນີນຂັ້ນຕອນການປະມູນຈັດຊືເຄື່ອງເສີມກ້ອງຖ່າຍຮູບຂອງ ທລຍ ສູນກາງ.
10. ດໍາເນີນຂັ້ນຕອນການປະມູນຈັດຊື້ເຄື່ອງກະຈ່າຍຂໍ້ມູນຂ່າວສານ ຂອງພະແນກພັດທະນາຊຸມຊົນ.

### ງ.3. ວຽກງານການເງິນ

1. ເຮັດວຽກຮ່ວມກັບທີມງານຜູ້ກວດສອບພາຍນອກ.
2. ກະກຽມບົດລາຍງານປະຈໍາເດືອນ ພະຈິກ 2013.
3. ສະຫລຸບລາຍງານການເບີກຈ່າຍເງິນໂຄງການຍ່ອຍຮອບວຽນ 9.
4. ເລັ່ງຊໍາລະເງິນໂຄງການຍ່ອຍ 85 % ຂອງຮອບວຽນ 10 ນໍາຄັງເງິນແຫ່ງຊາດ.
5. ຕິດຕາມການຂື້ນແຜນ/ວາງແຜນງົບປະມານ 2014 - 2016 ຂອງບັນດາພະແນກ.

***ຈ.	ໂຄງການປັບປຸງຊີວິດການເປັນຢູ່ ເພື່ອຄ້ຳປະກັນດ້ານໂພສະນາການ (ໂຄງການ LONG)***

1. ສືບຕໍ່ຕິດຕາມການເຮັດບົດບັນທຶກຄວາມເຂົ້າໃຈຮ່ວມກັບກະຊວງສາທາລະນະສຸກ.
2. ສືບຕໍ່ວາງແຜນເຮັດການປັບປຸງຄູ່ຈັດຕັ້ງປະຕິບັດໂຄງການຕ່າງໆ.
3. ລົງວາງແຜນແກ້ໄຂວຽກໂພສະນາການ ເມືອງວຽງທອງ ແຂວງ ຫົວພັນ.
4. ລົງຕິດຕາມການຈັດຝຶກອົບຮົມ ການເປັນຜູ້ອຳນວຍຄວາມສະດວກໃຫ້ພະນັກງານ ຄປພ ເມືອງວຽງທອງ ແລະ ເມືອງເຊໂປນ ແຂວງສະຫວັນນະເຂດ.
5. ລົງປັບປຸງຮ່າງ ແລະ ການປ້ອນຂໍ້ມູນໃສ່ຮ່າງຕິດຕາມ ແລະ ປະເມີນຜົນ ຄປພ ເມືອງເຊໂປນ ແຂວງ ສະຫວັນນະເຂດ.
6. ສະເໜີຂໍອະນຸມັດແຜນງົບປະມານ ແລະ ແຜນຈັດຊື້ນຳຜູ້ໃຫ້ທຶນ.

ວັນທີ 13 ທັນວາ 2013

| ຮັບຮູ້ ແລະ ເຫັນພ້ອມຈາກ<br>ຜູ້ອຳນວຍການບໍລິຫານ ທລຍ | ຢັ້ງຢືນໂດຍຫົວໜ້າພະແນກ<br>ຕິດຕາມປະເມີນຜົນ | ສັງລວມ ແລະ ລາຍງານ |
|---|---|---|
| -------------------------<br>ບຸນກວ້າງ ສຸວັນນະພັນ | ------------------------<br>ສີວິໄລ ວໍລະຈັກ | --------------------<br>ມະນີວັນ ອິນທະປັນຍາ |

# ເອກະສານຊ້ອນທ້າຍ